Moms in Prayer INTERNATIONAL
ກຸ່ມອະທິຖານສາກົນຂອງບັນດາແມ່ງ

# ນະໂຍບາຍຕ່າງໆ

**ແຕ່ລະກຸ່ມແມ່ນຕ້ອງມີຄວາມຮັບຜິດຊອບຕໍ່ນະໂຍບາຍຂອງແມ່ແຫ່ງການອະທິຖານສາກົນຢ່າງເອົາຈິງເອົາຈັງ ໂດຍບໍ່ມີຂໍ້ຍົກເວັ້ນໃດໆ.**

1. ບໍ່ວ່າຈະເປັນບຸກຄົນຫລື ກຸ່ມຄົນທີ່ບໍ່ໄດ້ປະຕິບັດຕາມຫລັກຄວາມເຊື່ອ ຫລືນະໂຍບາຍຂອງແມ່ແຫ່ງ ການອະທິຖານສາກົນແມ່ຈະບໍ່ມີສິດທີ່ຈະໃຊ້ຊື່ ຫລື ເຄື່ອງຫມາຍຂອງພັນທະກິດພວກເຮົາ, ຫລື ເປັນຕົວ ແທນໃຫ້ແກ່ພວກເຮົາໃນແບບໃດກໍ່ຕາມ.

2. ແມ່ແຫ່ງການອະທິຖານສາກົນບໍ່ແມ່ນກຸ່ມທີ່ຈັກຊອນ, ບໍ່ວ່າສິ່ງນັ້ນຈະມີຄຸນຄ່າຫລາຍປານໃດກໍຕາມ, ການເຂົ້າຮ່ວມໃນ ເລື່ອງການເມືອງ ແລະ ບັນຫາສັງຄົມແມ່ນຕ້ອງເຮັດໂດຍສ່ວນຕົວ ຈະບໍ່ໄດ້ກ່ຽວຂ້ອງກັບກຸ່ມອະທິຖານຂອງແມ່. ບໍ່ໃຫ້ໃຊ້ ຊື່ຂອງກຸ່ມອະທິຖານໃນເລື່ອງເຫລົ່ານີ້.

3. ການຮັກສາຄວາມລັບນຳຄວາມໄວ້ໃຈໃນການຮັບໃຊ້ພັນທະກິດ, ດັ່ງນັ້ນ ທຸກຄຳຂໍການອະທິຖານເພື່ອ ແມ່ນຕ້ອງຮັກສາໄວ້ເປັນຄວາມລັບ.

4. ແມ່ແຫ່ງການອະທິຖານສາກົນຈະບໍ່ມີການປະຊຸມອະທິຖານໃນສະຖານທີ່ຕ່າງໆຂອງໂຮງຮຽນສາທາລະນະ ພວກເຮົາອະທິຖານເພື່ອໂຮງຮຽນ, ແຕ່ບໍ່ໄດ້ຢູ່ທີ່ໂຮງຮຽນ.

5. ແມ່ແຫ່ງການອະທີ່ອະທິຖານສາກົນຈະບໍ່ຂໍຄຳອະທິຖານ ຫລື ມີຕູ້ຂໍຄຳອະທິຖານຢູ່ໃນສະຖານທີ່ໂຮງຮຽນ.

6. ແມ່ແຫ່ງການອະທິຖານສາກົນຈະບໍ່ໃຊ້ໂຮງຮຽນສາທາລະນະທີ່ຈະເປັນບ່ອນ ເອີ້ນຫລື ຊອກຈຳມະສິກ.

7. ຫ້າມບໍ່ໃຫ້ໃຊ້ ຊື່ ຫລື ເຄື່ອງຫມາຍຂອງກຸ່ມ ຫລື ໃຊ້ໃຊ້ຊື່ກຸ່ມໂດຍທີ່ບໍ່ໄດ້ຮັບອະນຸຍາດ. ຖ້າຈະໃຊ້ຕ້ອງໄດ້ຂໍ ອະນຸຍາດຈາກຫ້ອງການສຳນັກງານໃຫຍ່ກ່ອນ.

8. ທະບຽນລາຍຊື່ສຳມະສິກໃນກຸ່ມຂອງແມ່ແຫ່ງການອະທິຖານສາກົນແມ່ນໃຊ້ສະເພາະກຸ່ມເທົ່ານັ້ນ, ບໍ່ໃຫ້ເອົາໄປໃຊ້ ຫລື ແບ່ງປັນກັບຄົນອື່ນ ຫລື ອົງການໃດໆທີ່ບໍ່ກ່ຽວຂ້ອງກັບກຸ່ມແມ່ແຫ່ງການອະທິຖານ ສາກົນ.

9. ບໍ່ໃຫ້ໃຊ້ການໂຄສະນາໃນແບບໃດໆກ່ຽວກັບແມ່ແຫ່ງການອະທິຖານສາກົນ.

10. ເພື່ອຈະສາມາດໃຫ້ມີການ ອະທິຖານແບບສົນທະນາ ແລະ ເຮັດຕາມສີ່ບາດກ້າວໃນການອະທິຖານຂອງ ແມ່ແຫ່ງການທີ່ອະທິຖານ ພວກເຮົາຈຶ່ງບໍ່ເອົາແບບການອະທິຖານອື່ນທີ່ແມ່ອາດບໍ່ເຂົ້າໃຈ ແລະ ເຫັນດີ ນຳການອະທິຖານຂອງພວກເຮົາ ເຊັ່ນການອະທິຖານເປັນພາສາແປກໆ ແລະ ອື່ນໆ. ພວກເຮົາບໍ່ໄດ້ຕັດ ສິນ ຫລື ບໍ່ນັບຖື ແຕ່ວ່າຢາກໃຫ້ທຸກຄົນໄດ້ເຂົ້າຮ່ວມໃນການອະທິຖານທີ່ສາມາດເຫັນດີນຳການອະທິຖານ.

11. ແມ່ແຫ່ງການອະທິຖານສາກົນແມ່ນບໍ່ເຂົ້າຮ່ວມໃນການເວົ້າຂວັນ ນິນທາ ຫລື ການສົນທະນາໃດໆທີ່ ມີການວິພາກວິຈານ ນອກຈາກຄຳເວົ້າໃນທາງຂອງພະເຈົ້າ, ເຕັມລົ້ນດ້ວຍພະຄຸນຕໍ່ກັນ ແລະ ກັນ.

12. ແມ່ແຫ່ງການອະທິຖານເຊື່ອວ່າໃນການແຕ່ງງານຕາມພະຄຳພີຄືມີສັນຍາຕໍ່ກັນ ລະຫວ່າງຍິງ ຫນຶ່ງ ແລະ ຊາຍຫນຶ່ງ.

13. ກຸ່ມແມ່ແຫ່ງການອະທິຖານແມ່ນເຈາະຈົງສະເພາະໃສ່ແມ່ຍິງ.